ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

------=== 000 ===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 1911001/ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ: 16/11/2019

ຮຽນ : ທ່ານຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2019,
ທີ່ຈະຈັດຂຶ້ນໃນວັນທີ 15 ພະຈິກ 2019

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ "ມຫທຊ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2019 ທີ່ຈະຈັດຂຶ້ນ ໃນວັນທີ 15 ພະຈິກ 2019, ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດດັ່ງນີ້:

1. ຮັບຮອງງົບການເງິນ (ບໍ່ໄດ້ກວດສອບ) ຂອງບໍລິສັດ ສຳຫຼັບໄຕມາດທີ 3 ປີ 2019 ສິ້ນສຸດວັນທີ 30 ກັນຍາ 2019
2. ອະນຸມັດແນວທາງການຄັດເລືອກສະມາຊິກສະພາບໍລິຫານທົດແທນສະມາຊິກທີ່ໝົດວາລະລົງ ເພື່ອພິຈາລະນາຄັດເລືອກ ແລະສະເໜີໃຫ້ທີ່ປະຊຸມຜູ້ຖືຫຸ້ນຮັບຮອງຕໍ່ໄປ

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ດ້ວຍຄວາມນັບຖືຢ່າງສູງ
ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ຫຼວງ (ທ໋ານ ມານິບ ຕຣີລິດວິໄລ)